## ຜົນກະທົບຂອງພະຍາດ ຂອງໜອງໃນແທ້

- (ຜູ້ຊາຍ) ສາມາດເຮັດໃຫ້ຕ່ອມລູກໝາກອັກເສບ, ເຮັດໃຫ້ຍ່ຽວຍາກ, ແກ່ນອັນທະອັກເສບ, ທໍ່ສົ່ງອະສຸຈິຕີບຕັນ, ມີລູກຍາກ ແລະ ສາມາດຕິດເຊື້ອ HIV/AIDs ໄດ້.
- (ຜູ້ຍິງ) ສາມາດເຮັດໃຫ້ຜົ້ງທ້ອງນ້ອຍອັກເສບ, ເຈັບທ້ອງຕອນເປັນປະຈຳເດືອນແຮງ, ລຸລູກ ຫຼື ບາງຄົນເຮັດໃຫ້ທໍ່ສົ່ງໄຂ່ຕີບຕັນເຮັດໃຫ້ມີລູກຍາກ, ມີລູກນອກພົກ, ພົກຍ່ຽວອັກເສບ, ສາມາດຕິດໃສ່ລູກໄດ້ ແລະ ສາມາດຕິດເຊື້ອ HIV/AIDs ໄດ້.

## ວິທີການປ້ອງກັນ

- ບໍ່ຄວນມີຄູ່ຮ່ວມນອນຫຼາຍຄົນ.
- ຄວນປິ່ນປົວໃຫ້ຖືກວິທີຕາມແພດສັ່ງ.
- ຄວນໃສ່ຖົງຢາງອານາໄມທຸກຄັ້ງ ເວລາມີເພດສຳພັນ.



**ໝາຍເຫດ: ບາງພະຍາດ ຖົງຢາງອານາໄມ ກໍ່ບໍ່ສາມາດປ້ອງກັນໄດ້ 100 %**

# 1361 137

ໃຫ້ຄຳປຶກສາກ່ຽວກັບສຸຂະພາບທາງເພດ, ສຸຂະພາບຈະເລີນພັນ, ພະຍາດຕິດຕໍ່ທາງເພດສຳພັນ, **HIV/AIDS**, ສຸຂະພາບຈິດ

vycentre@yahoo.com
52174490 & 22661218
VWYC Fans
VWYC_Laos
vwyc fans
www.vwyclaos.org

### ທ່ານສາມາດເຂົ້າມາຮັບຄຳປຶກສາໄດ້ທີ່ ຫ້ອງກວດສຸຂະພາບໄວໜຸ່ມ



**ເປີດບໍລິການທຸກໆມື້ (ວັນຈັນ-ສຸກ)**
**ເວລາ8:30-16:30 ໂມງ**
ບໍລິການທີ່ຖືກຕ້ອງ ເປັນມິດ ແລະ ປິດລັບ
**ໂທ 021 252887**

**ຫ້ອງກວດສຸຂະພາບຕັ້ງຢູ່:**
- ບ້ານສີຫອມ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ຕິດກັບ ສີ່ແຍກໄຟແດງປາກປ່າສັກ
- ກົງກັນຂ້າມກັບທະນາຄານພັດທະນາລາວ

# ພະຍາດໜອງໃນແທ້

## ແມ່ນພະຍາດແນວໃດ?

**ສາມາດສົ່ງຂໍ້ຄວາມມາຂໍຮັບຄຳປຶກສາໄດ້ທີ່**
**ເບີ 020 52174490**
**020 22661218**




UNFPA

## ພະຍາດໜອງໃນແທ້

- ພະຍາດໜອງໃນແທ້ ແມ່ນພະຍາດຕິດຕໍ່ທາງເພດສຳພັນທີ່ເກີດຈາກການຕິດເຊື້ອຈຸລິນຊີ: Neisseria gonorrhea. ເຊື້ອດັ່ງກ່າວພາໃຫ້ເກີດມີອາການຢູ່ຕາມເຫຍື່ອເມືອກຕ່າງໆ: ປາກ, ຮູຄໍ, ທໍ່ຍ່ຽວ, ປາກມົດລູກ, ມົດລູກ, ທໍ່ສົ່ງໄຂ່, ເຫຍື່ອເມືອກຕາ ແລະ ຮູທະວານ.

### ຮູບພາບຂອງພະຍາດໜອງໃນ




## ການຕິດຕໍ່ຂອງໜອງໃນແທ້

- ຕິດຕໍ່ໄດ້ຈາກການມີເພດສຳພັນກັບຜູ້ທີ່ຕິດເຊື້ອ, ບໍ່ວ່າ ຈະເປັນທາງປາກ, ທາງຮູທະວານ, ຊ່ອງຄອດ, ໂດຍບໍ່ໄດ້ປ້ອງກັນ ແລະ ເດັກນ້ອຍເກີດຈາກແມ່ທີ່ມີເຊື້ອ.

## ອາການຂອງພະຍາດ

ຫຼັງຈາກທີ່ມີການຕິດເຊື້ອພະຍາດແລ້ວ ຈະມີອາການສະແດງອອກລະຫວ່າງ 2-14 ມື້.

**ສຳລັບເພດຊາຍ**
ໜອງຂຸ່ນ ສີຂຽວ, ເຫຼືອງ ຈາກອົງຄະຊາດ, ຍ່ຽວເຈັບ, ຍ່ຽວແສບ, ເຈັບລູກອັນທະ ຫຼື ໄຂ່ບວມ, ເຈັບຮູທະວານ, ມີນ້ຳໜອງອອກ ຫຼື ມີອາການຄັນ ແລະ 50% ບໍ່ມີອາການ.





**ສຳລັບເພດຍິງ**
ມີອາການລົງຂາວໃນຊ່ອງຄອດເພີ່ມຂຶ້ນ, ເຈັບແສບເວລາຍ່ຽວ, ເຈັບທ້ອງນ້ອຍ, ເລືອດອອກຫຼັງມີເພດສຳພັນ ແລະ ໃນໄລຍະກາງຮອບປະຈຳເດືອນ, ເຈັບເວລາທີ່ມີເພດສຳພັນ ແລະ 50% ບໍ່ມີອາການ.

## ການບົ່ງມະຕິ

ອີງໃສ່ປັດໄຈສ່ຽງ ການມີເພດສຳພັນທີ່ບໍ່ໄດ້ປ້ອງກັນ, ອີງໃສ່ອາການທີ່ພົບເຫັນ ແລະ ອີງໃສ່ຜົນກວດທາງດ້ານການວິເຄາະເຊັ່ນ:

- ເອົານ້ຳໜອງ ຫຼື ນ້ຳຍ່ຽວມາກວດ.
- Polymerase Chain Reaction (PCR).
- ເອົານ້ຳໜອງ ຫຼື ລົງຂາວໄປຍ້ອມສີກຼາມສແຕນແລ້ວໃຊ້ກ້ອງຈຸລະທັດຊ່ອງຫາເຊື້ອພະຍາດ.
- ເອົານ້ຳໜອງ ຫຼື ລົງຂາວໄປປູກຫາເຊື້ອ.

## ສິ່ງທີ່ຄວນປະຕິບັດ

- ຄວນເຂົ້າໄປພົບແພດເພື່ອຂໍຄຳປຶກສາ, ກວດ ແລະ ປິ່ນປົວໃຫ້ຖືກ ຕ້ອງ.
- ບໍ່ຄວນໄປຊື້ຢາມາກິນເອງ.
- ຄວນກິນຢາຕາມແພດສັ່ງໃຫ້ຄົບ.
- ຄວນປິ່ນປົວຄູ່ຮ່ວມນອນນຳ.
- ບໍ່ຄວນມີເພດສຳພັນໃນໄລຍະການປິ່ນປົວ.
- ສາມາດກິນອາຫານໄດ້ປົກກະຕິ



ຫ້ອງກວດສຸຂະພາບໄວໜຸ່ມ ຕັ້ງຢູ່: ບ້ານ ສີຫອມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສີ່ແຍກໄຟແດງວິທະຍາໄລປາກປ່າສັກ, ກົງກັນຂ້າມກັບ ທະນາຄານພັດທະນາລາວ.
ສາມາດໂທເບີ: 021 252887 (ຫຼື ສາມາດຂໍຄຳປຶກສາໄດ້ທີ່ເບີ 1361 ສຳລັບທ່ານຍິງ ແລະ 137 ສຳລັບທ່ານຊາຍ ໂທຟຣີ)